ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 19 ຫາ 23 ສິງຫາ 2024



ກອງປະຊຸມປຶກສາຫາລື ລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ
ກັບກະຊວງກະສິກຳ ແລະ ປ່າໄມ້

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ກອງປະຊຸມພົບປະ ແລະ ປຶກສາຫາລື ລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ ກັບກະຊວງກະສິກຳ ແລະ ປ່າໄມ້

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ໃນວັນທີ 29 ກໍລະກົດ 2024ນີ້, ທີ່ຫ້ອງປະຊຸມກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ມີກອງປະຊຸມປຶກສາຫາລື ແລະ ເຮັດວຽກຮ່ວມກັນຂອງ 2 ກະຊວງລະຫວ່າງກະຊວງອຸດສາຫະກຳ ແລະການຄ້າ ກັບ ກະຊວງກະສິກຳ ແລະປ່າໄມ້ ຂຶ້ນ ໂດຍການເປັນປະທານຮ່ວມຂອງ ທ່ານ ລິນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ແລະ ທ່ານ ມະໄລທອງ ກົມມະສິດ ລັດຖະມົນຕີກະຊວງອຸດສາຫະກຳແລະການຄ້າ ເຂົ້າໃນຮ່ວມຄັ້ງນີ້ມີຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ, ຫົວໜ້າຫ້ອງການ, ຫົວໜ້າກົມ, ສະຖາບັນຈາກທັງສອງກະຊວງເຂົ້າຮ່ວມ,ຈຸດປະສົງຂອງການປຶກສາຫາລືຄັ້ງນີ້ແມ່ນຕິດພັນກັບ ບັນຫາໂຄງປະກອບດ້ານລາຄາສິນຄ້າ ໂດຍສະເພາະ ໝູ ແລະ ເຂົ້າ ແລະ ການຈັດຕັ້ງປະຕິບັດການກຳນົດມາດຕະການຈຳກັດສິນຄ້າທີ່ນຳເຂົ້າຈາກຕ່າງປະເທດ

ໃນກອງປະຊຸມ ທັງສອງຝ່າຍໄດ້ແລກປ່ຽນ ແລະ ປະກອບຄຳເຫັນຮ່ວມກັນຢ່າງກົງໄປກົງມາບົນຄວາມຮັບຜິດຊອບໃນໜ້າວຽກທີ່ຕິດພັນຮ່ວມກັນເປົ້າໝາຍເພື່ອການປັບປຸງການປະສານງານ ແລະ ຄວາມເປັນເອກະພາບທາງດ້ານຂໍ້ມູນ ໂດຍສະເພາະ ບັນຫາໂຄງປະກອບສ້າງລາຄາສິນຄ້າຂອງໝູ ແລະ ເຂົ້າ, ບັນດາສາເຫດ ແລະ ປັດໃຈປິ່ນອ້ອມທີ່ມີຜົນກະທົບໂດຍກົງ ແລະ ທາງອ້ອມຂອງລາຄາສິນຄ້າ, ເພື່ອການປົກປ້ອງຜູ້ບໍລິໂພກ

ແລະ ການສົ່ງເສີມການຜະລິດ ແລະ ສ້າງລາຍຮັບແກ່ຊາວກະສິກອນ, ບັນຫາ, ສິ່ງທີ່ຕ້ອງໄດ້ຮ່ວມກັນປັບປຸງ ແລະ ແກ້ໄຂທີ່ຕິດພັນກັບການກຳນົດມາດຕະການຈຳກັດສິນຄ້າທີ່ນຳເຂົ້າຈາກຕາງປະເທດ ລວມໄປເຖິງຂໍ້ມູນກຳລັງການຜະລິດຂອງສິນຄ້າທີ່ສາມາດຜະລິດໄດ້ ແລະ ການຍັ້ງຢືນເຖິງຄວາມພຽງພໍທີ່ສາມາດຜະລິດໄດ້ພາຍໃນບາງສິນຄ້າກະສິກຳ.








**ຄະນະຮັບຜິດຊອບ:**
ທ່ານ ສີປະໄພ ໄຊສິງຄານ
ທ່ານ ສີສະຫວາດ ທອມດາລາ

**ບັນນາທິການ:**
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສີມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

**ຈັດໜ້າອອກແບບໂດຍ:**
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;